# ການສຳພາດເພື່ອການກັ່ນຕອງ CRAFFT

ເລີ້ມຕົ້ນ: "ຂ້າພະເຈົ້າຈະຂໍຖາມຄຳຖາມສອງສາມຂໍ້ ຊຶ່ງຂ້າພະເຈົ້າໄດ້ຖາມຄົນໄຂ້ທຸກຄົນຂອງຂ້າພະເຈົ້າ. ກະຣຸນາຕອບດ້ວຍຄວາມຊື່ສັດ. ຂ້າພະເຈົ້າຈະຮັກສາຄຳຕອບຂອງທ່ານໄວ້ເປັນຄວາມລັບ."

## *ພາກ* ***A***

| ໃນລະຫວ່າງ 12 ເດືອນຜ່ານມາ, ທ່ານໄດ້: | ບໍ່ແມ່ນ | ແມ່ນ |
|---|---|---|
| **1**. ດື່ມອັລກໍຮໍໃດໆ (ຫຼາຍກວ່າການຈິບດື່ມເທື່ອລະໜ້ອຍສອງສາມຄັ້ງ)? (ບໍ່ນັບລວມການຈິບເຫຼົ້າໃນລະຫວ່າງສັງສັນໃນຄອບຄົວ ຫຼື ພິທີທາງສາສະໜາ.) | ☐ | ☐ |
| **2**. ສູບກັນຊາໃດໆ? | ☐ | ☐ |
| **3**. ໃຊ້ສິ່ງອື່ນໃດ ເພື່ອຊ່ວຍໃຫ້ຮູ້ສຶກເຄີບເຄີ້ມ? ("ສິ່ງອື່ນໆ" ລວມມີ ຢາເສບຕິດຜິດກົດໝາຍ, ຢາຕາມຮ້ານຂາຍຢາ ແລະຢາ ຕາມໃບສັ່ງແພດ, ແລະ ສິ່ງຕ່າງໆ ຊຶ່ງທ່ານໃຊ້ເພື່ອດົມ ຫຼື "ສູດ") | ☐ | ☐ |

ເພື່ອການນຳໃຊ້ທາງການແພດເທົ່ານັ້ນ: ຄົນໄຂ້ໄດ້ຕອບວ່າ **"ແມ່ນ"** ຕໍ່ກັບຄຳຖາມໃດໆ ໃນພາກ **A** ບໍ່?

ບໍ່ແມ່ນ ☐ ↓ ຖາມສະເພາະຄຳຖາມ**ກ່ຽວກັບ**ຣົຖເທົ່ານັ້ນ, ຈາກນັ້ນໃຫ້

ແມ່ນ ☐ ↓ ຖາມຄຳຖາມ **CRAFFT** ທັງ 6 ຂໍ້

## *ພາກ* ***B***

| | ບໍ່ແມ່ນ | ແມ່ນ |
|---|---|---|
| **1.** ທ່ານເຄີຍຂີ່ຣົຖໃນຣົຖທີ່ຂັບໂດຍໃຜຜູ້ໜຶ່ງ (ລວມເຖິງໂຕທ່ານເອງ) ຊຶ່ງໄດ້ຢູ່ໃນອາລົມ "ເຄີບເຄີ້ມ" ຫຼື ກຳລັງນຳໃຊ້ເຫຼົ້າ ຫຼື ຢາເສບຕິດ ບໍ່? | ☐ | ☐ |
| **2.** ທ່ານເຄີຍໃຊ້ເຫຼົ້າ ຫຼື ຢາເສບຕິດ ເພື່ອຜ່ອນຄາຍ, ໃຫ້ຮູ້ສຶກດີຂຶ້ນກ່ຽວກັບຕົວເອງ, ຫຼື ໃຫ້ເຂົ້າກັນໄດ້ ບໍ່? | ☐ | ☐ |
| **3.** ທ່ານເຄີຍໃຊ້ເຫຼົ້າ ຫຼື ຢາເສບຕິດໃນຂະນະທີ່ທ່ານຢູ່ຕາມລຳພັງ, ຫຼື ຢູ່ຜູ້ດຽວ ບໍ່? | ☐ | ☐ |
| **4.** ທ່ານເຄີຍລືມສິ່ງຕ່າງໆ ທີ່ທ່ານໄດ້ເຮັດ ໃນຂະນະນຳໃຊ້ເຫຼົ້າ ຫຼື ຢາເສບຕິດ ບໍ່? | ☐ | ☐ |
| **5.** ຄອບຄົວ ຫຼື ໝູ່ເພື່ອນຂອງທ່ານເຄີຍບອກທ່ານບໍ່ວ່າ ທ່ານຄວນຫຼຸດຜ່ອນການດື່ມເຫຼົ້າ ຫຼື ໃຊ້ຢາເສບຕິດ? | ☐ | ☐ |
| **6.** ທ່ານເຄີຍມີບັນຫາເດືອດຮ້ອນໃນຂະນະທີ່ທ່ານນຳໃຊ້ເຫຼົ້າ ຫຼື ຢາເສບຕິດ ບໍ່? | ☐ | ☐ |

ແຈ້ງການວ່າດ້ວຍການຮັກສາຄວາມລັບ:

ຂໍ້ມູນທີ່ບັນທຶກຢູ່ໃນໜ້ານີ້ອາດໄດ້ຮັບການປົກປ້ອງໂດຍກົດລະບຽບພິເສດວ່າດ້ວຍການຮັກສາຄວາມລັບແຫ່ງຣັຖບານກາງ (42 CFR Part 2), ຊຶ່ງຫ້າມການເປີດເຜີຍຂໍ້ມູນນີ້ ເວັ້ນແຕ່ວ່າຈະໄດ້ຮັບການຍິນຍອມເປັນລາຍລັກອັກສອນສະເພາະ. ການອະນຸຍາດໂດຍທົ່ວໄປສຳລັບການເປີດເຜີຍຂໍ້ມູນທາງການແພດແມ່ນບໍ່ພຽງພໍສຳລັບຈຸດປະສົງນີ້.

© CHILDREN'S HOSPITAL BOSTON, 2009. ສະຫງວນລິຂະສິດທັງໝົດ.

ຜະລິດຊ້ຳໃໝ່ດ້ວຍການອະນຸຍາດຈາກ ສູນຄົ້ນຄວ້າວິໃຈດ້ານການຕິດສານເສບຕິດສຳລັບວັຍໜຸ່ມ (Center for Adolescent Substance Abuse Research: CeASAR, ໂຮງໝໍເດັກແຫ່ງບອສຕັນ (Children's Hospital Boston). (www.ceasar.org)

## ຄຳແນະນຳສຳລັບການໃຫ້ຄະແນນ: ສຳລັບເຈົ້າໜ້າທີ່ດ້ານການແພດເທົ່ານັ້ນ

ການໃຫ້ຄະແນນ CRAFFT: ຄຳຕອບ “ແມ່ນ” ແຕ່ລະຂໍ້ໃນພາກ **B** ຈະໄດ້ 1 ຄະແນນ.

ຄະແນນລວມ 2 ຄະແນນຂຶ້ນໄປ ແມ່ນການກັ່ນຕອງທີ່ເປັນບວກ, ຊຶ່ງຊີ້ໃຫ້ເຫັນເຖິງຄວາມຕ້ອງການໃນການປະເມີນຜົນຕື່ມ

ຄວາມເປັນໄປໄດ້ຂອງການວິນິດໄສການພຶ່ງພາ/ການຕິດສານເສບຕິດ ແມ່ນອີງຕາມຄະແນນ **CRAFFT**[1,2]




### ເກນໃນການວິນິດໄສ DSM-IV[3] (ແບບຫຍໍ້)

ການຕິດສານເສບຕິດ (ສິ່ງຕ່າງໆ ຕໍ່ໄປນີ້ 1 ຢ່າງຂຶ້ນໄປ):

- ນຳໃຊ້ສາເຫດຄວາມລົ້ມເຫຼວເພື່ອໃຫ້ປະຕິບັດໜ້າທີ່ໄດ້ຕາມຂບັງຄັບທີ່ບ່ອນເຮັດວຽກ, ໂຮງຮຽນ, ຫຼື ເຮືອນ
- ນຳໃຊ້ຊ້ຳອີກໃນສະຖານນະການທີ່ເປັນອັນຕະລາຍ (ເຊັ່ນ ໃນລະຫວ່າງຂັບຣົຖ)
- ມີບັນຫາທາງກົດໝາຍຊ້ຳອີກ
- ນຳໃຊ້ຢ່າງຕໍ່ເນື່ອງທັງໆທີ່ມີບັນຫາເກີດຊ້ຳໆອີກ

ການເພິ່ງພາສານເສບຕິດ (ມີສິ່ງຕໍ່ໄປນີ້ 3 ສິ່ງຂຶ້ນໄປ):

- ທົນທານ
- ຖອນໂຕ
- ນຳໃຊ້ສານເສບຕິດໃນປະລິມານຫຼາຍຂຶ້ນ ຫຼື ນຳໃຊ້ໃນລະຍະເວລາດົນກວ່າທີ່ໄດ້ວາງແຜນໄວ້
- ບໍ່ປະສົບຄວາມສຳເລັດໃນການຫຼຸດຜ່ອນການນຳໃຊ້ ຫຼື ເຊົາ
- ໃຊ້ເວລາຢ່າງຫຼາຍໃນການໃຫ້ໄດ້ມາຊຶ່ງສານເສບຕິດ ຫຼື ໃຫ້ຟື້ນຄືນຈາກຜົນກະທົບ
- ຍົກເລີກກິດຈະກຳທີ່ສຳຄັນຫຼາຍຢ່າງເນື່ອງຈາກສານເສບຕິດ
- ຍັງຄົງນຳໃຊ້ຢ່າງຕໍ່ເນື່ອງທັງໆທີ່ມີຜົນຕາມມາທີ່ເປັນອັນຕະລາຍ

© Children’s Hospital Boston, 2009. ແບບຟອມນີ້ອາດຖືກພະລິດຊ້ຳໃໝ່ໃນຮູບແບບດຽວກັນກັບຕົ້ນສະບັບ ເພື່ອການນຳໃຊ້ໃນສະຖານພະຍາບານຕ່າງໆ, ຊຶ່ງເປັນຄວາມເອື້ອເຟື້ອຈາກສູນຄົ້ນຄວ້າວິໃຈດ້ານການຕິດສານເສບຕິດສຳລັບວັຍ ໜຸ່ມ, ໂຮງໝໍເດັກແຫ່ງບອສຕັນ ເລກທີ 300 Longwood Ave, Boston, MA 02115, U.S.A., (617) 355-5433, www.ceasar.org.

**ເອກະສານອ້າງອີງ:**

1. Knight JR, Shrier LA, Bravender TD, Farrell M, Vander Bilt J, Shaffer HJ. A new brief screen for adolescent substance abuse (ການກັ່ນຕອງແບບຫຍໍ້ໃໝ່ສຳລັບການຕິດສານເສບຕິດໃນວັຍໜຸ່ມ). Arch Pediatr Adolesc Med 1999;153(6):591-6.
2. Knight JR, Sherritt L, Shrier LA, Harris SK, Chang G. Validity of the CRAFFT substance abuse screening test among adolescent clinic patients (ການກວດສອບຄວາມຖືກຕ້ອງຂອງ CRAFFT ວ່າດ້ວຍການທົດສອບການກວດກັ່ນຕອງການຕິດສານເສບຕິດໃນກຸ່ມຜູ້ປ່ວຍທາງການແພດທີ່ເປັນວັຍໜຸ່ມ) . Arch Pediatr Adolesc Med 2002;156(6):607-14.
3. American Psychiatric Association. Diagostic and Statistical Manual of Mental Disorders (ຄູ່ມືດ້ານການວິນິດໄສແລະດ້ານສະຖິຕິສຳລັບຄວາມຜິດປົກກະຕິທາງຈິດ), fourth edition, text revision. Washington DC, American Psychiatric Association, 2000.